# ການປ້ອງກັນ
# ແລະ ກຳຈັດຫອຍກິນເຂົ້າ

## 1. ຮູບຮ່າງການປະກອບສ້າງ ຂອງຫອຍ

ຫອຍກິນເຂົ້າ ມີຊື່ວິທະຍາສາດວ່າ : *Pomocea SP.* ພົບເຫັນໃນລາວມີ 2 ຊະນິດຄື : ຊະນິດເປືອກຫຸ້ມສີຂຽວເຂັ້ມປົນສີນ້ຳຕານ ( *P. Insualarus* )

ມີຮູບຮ່າງ ແລະ ຂະໜາດ ຄ້າຍຄືຫອຍໂຂ່ງ, ຫອຍປັງ ຖ້າສັງເກດໃຫ້ດີເຫັນວ່າຫອຍກິນເຂົ້າກວ້າງກວ່າ, ກົ້ນຂອດ ແລະ ບໍ່ແຫຼມປານໃດ, ເປືອກບາງ ແລະ ຜ່ອຍເມື່ອທຸບຈະແຕກງ່າຍ ລຳຕົວຫອຍຫຸ້ມດ້ວຍເປືອກທີ່ກ້ຽງດີ ມີຝາ ແລະ ໄງດຽວຂ້ອນຂ້າງມົນ ແລະ ໃຫຍ່ ຫົວຂອງຫອຍຈະເປັນແຜ່ນແຂງ ແລະ ລື່ນອອກຈາກໂຕ ຫົວມີປາກ ແລະ ອະໄວຍະວະຄ້າຍໜວດນຶ່ງຄູ່ ປາຍແຫຼມສັ້ນກວ່າໜວດໃຊ້ຮັບຄວາມຮູ້ສຶກ, ມີໜວດນຶ່ງຄູ ແລະ ຕານຶ່ງຄູ່, ມີແຂ້ວນຶ່ງຄູ່ເປັນດານແຂງໆ ໃຊ້ກັດຕົ້ນໄມ້ໃບຫຍ້າ ຫອຍເຄື່ອນທີ່ໂດຍໃຊ້ກ້າມຊີ້ນທີ່ເປັນແຜ່ນຍາວເອີ້ນວ່າ ຕີນຫອຍ ເພື່ອຄານໄປຕາມໜ້າດິນ ຫຼື ພື້ນນ້ຳ



ຮູບ : ຫອຍ

## 2. ລັກສະນະການທຳລາຍ

ທຳລາຍຕົ້ນເຂົ້າໂດຍກັດກິນໃບ ແລະ ກ້ານໃບ ໂຕທີ່ຢູ່ໃກ້ໜ້ານ້ຳມັກທຳລາຍເຂົ້າທີ່ປັກດຳໃໝ່ ຫາເຂົ້າແຕກກໍສູງສຸດ ແລະ ເມື່ອເຂົ້າແກ່ກໍ່ກັດກິນຮາກເຂົ້າ. ມັກກິນພືດອ່ອນ ແລະ ມີຢາງ .

## 3. ວົງຈອນຊີວິດ ແລະ ການແຜ່ພັນ

ຈຳແນກເພດ ຂອງຫອຍກິນເຂົ້າຖ້າໂຕຜູ້ຝາ ແລະ ໄງຈະໂນນຢູ່ຈຸດກາງຂອງຝາ ມີອະໄວຍະວະເພດ ເປັນຮູບທໍ່ຍາວສີຂາວເຫັນໄດ້ຊັດເຈນ ແລະ ຖ້າໂຕແມ່ກໍ່ຈະຫຼູບລົງເລັກນ້ອຍ. ຫອຍໂຕເຕັມໄວຈະມີຍຸ 3 ເດືອນ ມີນ້ຳໜັກປະມານ 5 ກຣາມ, ໂຕແມ່ມີໄຂ່ໃນທ້ອງກ່ອນຈຶ່ງເລີ້ມປະສົມພັນໂດຍຈັບຄູ່ກັນຢູ່ຫຼາຍຊົ່ວໂມງ, ຈາກນັ້ນ 1—2 ວັນຕໍ່ມາໂຕແມ່ໄຂ່ອອກ ຊຶ່ງສ່ວນຫຼາຍແມ່ນ ເວລາກາງຄືນໂດຍໄຕ່ຂຶ້ນຕົ້ນພືດ ແລະ ຫຼັກໄມ້ທີ່ມີລະດັບສູງ ກວ່າໜ້ານ້ຳ ໄຂ່ທີ່ອອກໃໝ່ຈະຫຸ້ມດ້ວຍຢາງ ຕໍ່ມາຈຶ່ງກ້ານ ແລະ ແຂງຕົວເຂົ້າ ໄຂ່ຈັບກັນເປັນກຸ່ມ ມີສີບົວ ກຸ່ມນຶ່ງຍາວປະມານ 1— 5 ຊຕມ ໃນແຕ່ລະກຸ່ມມີໄຂ່ປະມານ 400—3000 ໜ່ວຍ ພາຍໃນ 7—12 ວັນໄຂ່ຈະເປັນສີຂາວ ແລະ ສີຂີ້ເທົ່າກ່ອນຈະເບາະເປັນຕົວອ່ອນ ຫອຍນ້ອຍຂະໜາດເທົ່າຫົວເຂັມໝຸດຈະກິນໄຣນ້ຳ ແລະ ຈະເລີນເຕີບໂຕວ່ອງໄວ. ເມື່ອອາຍຸໄດ້ 3 ເດືອນ ຈະກາຍເປັນໂຕແກ່ເຕັມໄວ ແລະ ສາມາດສືບພັນໄດ້ ຫອຍທີ່ອອກໄຂ່ແລ້ວປະມານ 4 —10 ວັນສາມາດປະສົມພັນ ແລະ ອອກໄຂ່ໄດ້ອີກ ໃນລະດູຝົນຈະໄຂ່ໄດ້ເຖິງ 10 — 14 ຄັ້ງ / ເດືອນ ແລະ ອອກໄຂ່ໄດ້ຕະຫຼອດປີ, ຕະຫຼອດຊົ່ວອາຍຸຂອງຫອຍແມ່ນ 2—3 ປີ .

## 4. ວິທີປ້ອງກັນ ແລະ ກຳຈັດ

ວິທີດີທີ່ສຸດກໍ່ຄືແບບ
ປະສົມປະສານໂດຍໃຊ້ຫຼາຍເຕັກນິກວິທີການ ຄື:

\# **ເຕັກນິກການປ້ອງກັນ**

- ຫຼີກເວັ້ນການເຄື່ອນຍ້າຍຫອຍໄປລ້ຽງ ຫຼື ປ່ອຍໃນຫ້ອງຖິ່ນອື່ນ .
- ເປັ່ງນ້ຳນາອອກຫຼັງຈາກປັກດຳ ຫຼື ຈຶ່ງໄວ້ນ້ອຍທີ່ສຸດ 1 ຊຕມ .
- ປ້ານຄັນນາໃຫ້ສູງດີ ແລະ ໝັ່ນອັດບ່ອນຮົ່ວໄຫຼ , ຢູ່ບ່ອນເປັ່ງນ້ຳເຂົ້າອອກນາຕ້ອງໃສ່ຕາໜ່າງກັນໄວ້ ເພື່ອບໍ່ໃຫ້ຫອຍລັກລອດເຂົ້າມາ .

\# **ວິທີການປາບ**

- ເກັບກຸ່ມໄຂ່ ແລະ ໜ່ວຍຫອຍ ດ້ວຍມື ປະຕິບັດໄດ້ຢ່າງຕໍ່ເນື່ອງ ທຸກລະຄັ້ງຢ່າງນ້ອຍ .
- ໃຊ້ດາງກວດໃນໄຮ່ນາທີ່ຄາດແລ້ວກ່ອນປັກດຳ ຫຼື ໃຊ້ໃບໝາກຫຸ່ງ , ໃບຈຳປາ, ໃບມັນຕົ້ນ, ເປືອກໝາກນັດ, ໝາກແຕງ ແລະ ເສດອາຫານ ຢ່າງໃດນຶ່ງໄປວາງໄວ້ເປັນຈຸດລຽບ ຕາມຄັນນາເພື່ອລໍ້ເກັບຫອບແບບງ່າຍໆ .
- ທຳລາຍໄຂ່ເປັນວິທີການທີ່ມີປະສິດທິພາບດີ .
- ເຮັດຮ່ອງລຽບຕາມຄັນນາຂະໜາດ 40 X 40 X 20 ເວລາແດດກ້າຫອຍຈະມາທ້ອນກັນຢູ່ຮ່ອງສະດວກໃນການເກັບ .
- ປ່ອຍຝູງເປັດລົງນາກ່ອນການປັກດຳ ຫຼື ພາຍຫຼັງປັກດຳໄດ້ 30 ວັນ .
- ໃຊ້ສານເຄມີປາບ ຄວນເປັນວິທີສຸດທ້າຍ , ຖ້າຫາກມີ

ການລະບາດຂອງຫອຍຫຼາຍເກີນຄວນ ໃນທັນທີຫຼັງຈາກປັກດຳແລ້ວ .

ສານທີ່ຄວນໃຊ້ ໄດ້ແກ່ :

- ນີໂຄລຊາໄມ ( *Niclosamide* ) ຫຼື ໄບລຸດໄຊ ( *bay lucide* ) ໃຊ້ປະສົມນ້ຳສີດ ຫຼື ຫົດໃນອັດຕາ 5 ບ່ວງ ແກງ (50 ກລ / ໄລ່ ) ປະສົມນ້ຳປະມານ 40 ລິດ ໃສ່ໃນລະດັບນ້ຳນາບໍ່ເກີນ 5 ຊຕມ .
- ເມທອນດີໄຮ ຫຼື ແອງໂກຣສະລັກ ເປັນເມັດສີບົວໃຊ້ຫ່ວານໃນອັດຕາ 0.5 ກິໂລ / ໄລ່ ໃນລະດັບນ້ຳບໍ່ເກີນ 5 ຊຕມ .
- ຄອບເປີຊັນເຟດ ເປັນຝຸ່ນສີຟ້າ ໃຊ້ປະສົມນ້ຳໃນອັດຕາ 1 ກລ / ໄລ່ ປະສົມນ້ຳ 80 ລິດ ສີດ ຫຼື ຫົດດ້ວຍບົວຫົດຜັກ

**# ຂໍ້ຄວນຈຳ**

ກ່ອນຈະໃຊ້ຢາຂ້າຫອຍ ຄວນເປັ່ງນ້ຳອອກໃຫ້ຈົ່ງໄວ້ພໍຖ້ວມ ຂັງທົ່ວໄຮ່ນາ ຍັງປະມານ 5 ຊຕມ ເພາະຖ້າລະດັບນ້ຳໜ້ອຍ ຫອຍຈະເຂົ້າຝັງຕົວໃນດິນເປັນສ່ວນໃຫຍ່ ແລ້ວຈະບໍ່ຖືກຢາ ຫຼື ຖ້າລະດັບນ້ຳຫຼາຍໂພດຢາຈະຈືດຈາງ ແລະ ກໍ່ສິ້ນເປືອງຢາອີກດ້ວຍ. ດີແທ້ການໃຊ້ຢາຄວນເປັນຕອນແລງ ໄກ້ຄ່ຳຍາມອາກາດເຢັນ ເວລານີ້ຫອຍຈະຂື້ນຈາກດິນ ມາກິນອາຫານທຸກຕົວ ຖ້າບ່ອນໃດນ້ຳເລິກຕ້ອງສີດ ແລະ ຫ່ວານຢາເພີ້ມຂື້ນ ຫ້າມໃຊ້ຢາ ແອນໂດຊັນແຟນ ເພາະເປັນຢາອັນຕະລາຍສູງຕໍ່ສະພາບແວດລ້ອມ .

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ຂໍ້ແນະນຳ
# ກ່ຽວກັບການປ້ອງກັນ ແລະ ກຳຈັດຫອຍສັດຕູເຂົ້າ



ຈັດຕັ້ງປະຕິບັດໂດຍ *CETDU*
(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (*LEAP*)